ລາວຕີ້

# ແຈ້ງການເລື້ອງການຂາດຄຸນສົມບັດໃນທາງການບໍລິຫານ

| | |
|---|---|
| ວັນທີແຈ້ງການ : | |
| ຊື່ກໍລະນີ : | |
| ເລກ : | |
| ຊື່ພະນັກງານກໍາກັບການຊ່ວຍເຫຼືອ : | |
| ເລກ : | |
| ໂທຣະສັບ : | |
| ທີ່ຢູ່ : | |

(ADDRESSEE)

**ມີຄໍາຖາມບໍ່? ຈົ່ງຖາມພະນັກງານກໍາກັບການຊ່ວຍເຫຼືອຂອງທ່ານ.**

**ການພິຈາລະນາຄະດີຂອງຣັຖ: ທ່ານບໍ່ສາມາດຂໍອຸທອນການປະຕິບັດເລື້ອງການຂາດຄຸນສົມບັດໃນສານພິຈາລະນາຄະດີຂອງຣັຖໄດ້. ຖ້າຫາກທ່ານຄິດວ່າ ຈໍານວນຜົນປະໂຫຍດ CalFresh ອັນໃໝ່ສໍາລັບສະມາຊິກໃນຄົວເຮືອນຂອງທ່ານຜິດພາດ, ທ່ານສາມາດຂໍໃຫ້ມີການພິຈາລະນາຄະດີໄດ້. ໜ້າຫຼັງຂອງໜ້ານີ້ຈະບອກວິທີການ. ສ່ວນຫຼາຍແລ້ວຈໍານວນຜົນປະໂຫຍອັນໃໝ່ນັ້ນຈະບໍ່ປ່ຽນແປງ ເວັ້ນແຕ່ວ່າ ສານຕັດສິນໃຫ້ປ່ຽນແປງ.**

## ການປະຕິບັດເລື້ອງການຂາດຄຸນສົມບັດ

ການປະຕິບັດຕໍ່ໄປນີ້ເຮັດໃຫ້ທ່ານຂາດຄຸນສົມບັດຈາກໂຄງການ CalFresh:

- ☐ ຄໍາຕັດສິນຈາກການພິຈາລະນາຄະດີຂອງຣັຖພົບວ່າ ທ່ານໄດ້ລະເມີດໂຄງການໂດຍເຈດຕະນາ.
- ☐ ຄໍາຕັດສິນຂອງສານພົບວ່າທ່ານໄດ້ລະເມີດໂຄງການໂດຍເຈດຕະນາ.
- ☐ ທ່ານໄດ້ເຊັນຊື່ໃນຂໍ້ຕົກລົງການໃຫ້ຄວາມຍິນຍອມເລື້ອງການຂາດຄຸນສົມບັດໃນວັນທີ _________.
- ☐ ທ່ານໄດ້ເຊັນຊື່ໃນໜັງສືການສະຫຼະສິດການພິຈາລະນາຄະດີເລື້ອງການຂາດຄຸນສົມບັດ (Administrative Disqualification Hearing Waiver) ໃນວັນທີ_____________________.
- ☐ ທ່ານໄດ້ຂາດຄຸນສົມບັດຈາກໂຄງການ CalFresh ໃນ______________.
  (ສະຖານທີ່)

ສໍາເນົາຂອງໜັງສືແຈ້ງການປະຕິບັດໄດ້ຖືກສົ່ງໃຫ້ທ່ານແລ້ວ. ຖ້າຫາກ ການພິຈາລະນາຄະດີຂອງຣັຖພົບວ່າທ່ານໄດ້ລະເມີດໂຄງການໂດຍເຈດຕະນາ, ທາງຣັຖ ຫຼື ຣັຖບານກາງຍັງອາດດໍາເນີນຄະດີກັບທ່ານໃນສານ.

## ບົດລົງໂທດເລື້ອງການຂາດຄຸນສົມບັດ

ບົດລົງໂທດເລື້ອງການຂາດຄຸນສົມບັດແມ່ນ 12 ເດືອນສໍາລັບການລະເມີດຄັ້ງທໍາອິດ, 24 ເດືອນສໍາລັບການລະເມີດຄັ້ງທີສອງ, ແລະຂາດຄຸນສົມບັດຖາວອນສໍາລັບການລະເມີດຄັ້ງທີສາມ. ມີບົດລົງໂທດແຍກຕ່າງຫາກ ຖ້າຫາກທ່ານຝ່າຝືນກົດລະບຽບເຫຼົ່ານີ້:

- ຖ້າຫາກ ທ່ານຖືກພົບວ່າມີຄວາມຜິດໃນສານຍຸດຕິທັມໃດໆໃນເລື້ອງການແລກປ່ຽນຜົນປະໂຫຍດ CalFresh ກັບປືນ, ອາວຸດ, ຫຼື ລະເບີດ, ທ່ານ ອາດຂາດຄຸນສົມບັດຕະຫຼອດໄປສໍາລັບການລະເມີດຄັ້ງທໍາອິດ.
- ຖ້າຫາກ ທ່ານຖືກພົບວ່າມີຄວາມຜິດຈາກການແລກປ່ຽນຜົນປະໂຫຍດ CalFresh ກັບສານເສບຕິດ, ທ່ານອາດຂາດຄຸນສົມບັດເປັນເວລາ 24 ເດືອນສໍາລັບການລະເມີດຄັ້ງທໍາອິດແລະຕະຫຼອດໄປສໍາລັບການລະເມີດຄັ້ງທີສອງ.
- ຖ້າຫາກ ທ່ານຖືກພົບວ່າມີຄວາມຜິດຈາກການແລກປ່ຽນ ຫຼື ຂາຍຜົນປະໂຫຍດ CalFresh ທີ່ມີມູນຄ່າ $500 ຫຼືຫຼາຍກວ່ານັ້ນ,ທ່ານອາດຂາດຄຸນສົມບັດຕະຫຼອດໄປ.
- ຖ້າຫາກ ທ່ານຖືກພົບວ່າທ່ານໄດ້ຍື່ນຄໍາຮ້ອງຂໍຫຼາຍກວ່າໜຶ່ງຄໍາຮ້ອງຂໍໃນເວລາດຽວກັນ ແລະໄດ້ໃຫ້ຂໍ້ມູນລະບຸຕົວຕົນ ຫຼື ຂໍ້ມູນເລື້ອງທີ່ຢູ່ອາໄສປອມ, ທ່ານອາດຂາດຄຸນສົມບັດເປັນເວລາສິບປີ.

ນີ້ແມ່ນການລະເມີດຄັ້ງທີ_____________________ຂອງທ່ານ, ຊຶ່ງໝາຍຄວາມວ່າ:

- ☐ ທ່ານບໍ່ສາມາດຮັບເອົາຜົນປະໂຫຍດ CalFresh ເປັນເວລາ ___________ ເດືອນ, ນັບແຕ_______________ຫາ_________________.
- ☐ ທ່ານໄດ້ຂາດຄຸນສົມບັດໂດຍຖາວອນຈາກໂຄງການ CalFresh, ຕັ້ງແຕ່ _________________.

**ກົດລະບຽບ:** ກົດລະບຽບເຫຼົ່ານີ້ນໍາໃຊ້ບັງຄັບ. ທ່ານສາມາດ ກວດກາຄືນໄດ້ທີ່ຫ້ອງການສະຫວັດດີການຂອງທ່ານ: MPP ມາດຕາ 20-300.221(c), 20-300.3, 22-003.11, 63-804.1, 63-805.1.

## ການສິ້ນສຸດການຂາດຄຸນສົມບັດ

- ຖ້າຫາກ ທ່ານໄດ້ຂາດຄຸນສົມບັດເປັນເວລາ 12 ຫຼື 24 ເດືອນ ແລະຍັງຄົງອາໄສຢູ່ໃນຄົວເຮືອນ CalFresh ດຽວກັນ, ທ່ານຄວນເລີ້ມທີ່ຈະຮັບເອົາ CalFresh ໂດຍອັດຕະໂນມັດຫຼັງຈາກວັນທີສິ້ນສຸດທີ່ລະບຸໄວ້ຂ້າງເທິງ. ຖ້າວ່າບໍ່ເກີດເຫດການແນວນັ້ນ, ທ່ານກໍຄວນໂທຣຫາພະນັກງານກໍາກັບການຊ່ວຍເຫຼືອຂອງທ່ານ ຫຼື ສົ່ງຟອມທີ່ຄັດຕິດມານັ້ນກັບຄືນ.
- ຖ້າຫາກ ທ່ານອາໄສຢູ່ໃນຄົວເຮືອນ CalFresh ໃໝ່, ທ່ານຕ້ອງຮຽກຮ້ອງຂໍໃຫ້ເພີ້ມຊື່ຂອງທ່ານເຂົ້າໃນຄົວເຮືອນ ຫຼັງຈາກສິ້ນສຸດວັນທີ່ທີ່ລະບຸໄວ້ຂ້າງເທິງ. ທ່ານ ຫຼື ຕົວແທນທີ່ໄດ້ຮັບອະນຸຍາດຂອງທ່ານມີສິດທີ່ຈະຍື່ນຄໍາຮ້ອງຂໍ CalFresh ໂດຍສົ່ງຟອມກັບຄືນໄປທີ່ພະແນກສະຫວັດດີການ ຫຼື ໄປສົ່ງດ້ວຍຕົນເອງ, ໂດຍທາງໄປສະນີ, ທາງແຟກຊ, ທາງອີເມວ, ຜ່ານການສົ່ງທາງອີເລັກໂຕຣນິກໃດໜຶ່ງ, ຫຼື ຜ່ານການຮ້ອງຂໍທາງອອນລາຍກໍໄດ້ທີ່: http/www.benefitscal.org/BenefitsPortal/landing.html.
- ຖ້າຫາກ ທ່ານບໍ່ໄດ້ອາໄສຢູ່ໃນຄົວເຮືອນທີ່ຮັບເອົາ CalFresh ໃນເວລາສິ້ນສຸດລະຍະການຂາດຄຸນສົມບັດ, ທ່ານຕ້ອງຮ້ອງຂໍຮັບໃໝ່ສໍາລັບ CalFresh. ທ່ານ ຫຼື ຕົວແທນທີ່ໄດ້ຮັບອະນຸຍາດຂອງທ່ານມີສິດທີ່ຈະຍື່ນຄໍາຮ້ອງຂໍຮັບ CalFresh ໂດຍສົ່ງຟອມກັບຄືນໄປທີ່ພະແນກສະຫວັດດີການ ຫຼື ໄປສົ່ງດ້ວຍຕົນເອງ, ໂດຍທາງໄປສະນີ, ທາງແຟກຊ, ທາງອີເມວ, ຜ່ານການສົ່ງທາງອີເລັກໂຕຣນິກໃດໜຶ່ງ, ຫຼື ຜ່ານການຮ້ອງຂໍທາງອອນລາຍກໍໄດ້ທີ່: http/www.benefitscal.org/BenefitsPortal/landing.html.
- ທ່ານສາມາດສົ່ງຄືນຟອມທີ່ຢູ່ໜ້າຕໍ່ໄປເພື່ອຮຽກຮ້ອງຂໍເອົາ CalFresh ຂອງທ່ານກັບຄືນມາ.
- ຖ້າຫາກ ທ່ານໄດ້ຂາດຄຸນສົມບັດໂດຍຖາວອນຈາກໂຄງການ CalFresh, ທ່ານບໍ່ສາມາດເອົາ CalFresh ຂອງທ່ານກັບຄືນມາໄດ້.

## ແຈ້ງການຕໍ່ສະມາຊິກຄົນອື່ນໆ ໃນຄົວເຮືອນຂອງທ່ານ

- ☐ ເນື່ອງຈາກ_______________________ໄດ້ຂາດຄຸນສົມບັດຈາກໂຄງການ CalFresh:
  - ☐ ຜົນປະໂຫຍດ CalFresh ຂອງທ່ານຈະປ່ຽນຈາກ $___________ ເປັນ $____________________ຕັ້ງແຕ່_______________.
    - ☐ ແຕ່ເນື່ອງຈາກວ່າ ທ່ານໄດ້ລາຍງານການປ່ຽນແປງອັນໜຶ່ງ, ຜົນປະໂຫຍດ CalFresh ຂອງທ່ານຈະແຕກຕ່າງອອກໄປ. ແຈ້ງການເລື້ອງການປ່ຽນແປງທີ່ຄັດຕິດມານີ້ຈະສະແດງໃຫ້ເຫັນເຖິງຈໍານວນທີ່ທ່ານຈະໄດ້ຮັບ.
  - ☐ ຜົນປະໂຫຍດ CalFresh ຂອງທ່ານຈະຢຸດຊະງັກຕັ້ງແຕ່_________. ເນື່ອງຈາກຜົນຂອງການຂາດຄຸນສົມບັດນີ້, ລາຍໄດ້ຂອງທ່ານແມ່ນສູງເກີນໄປ. ທ່ານສາມາດຮ້ອງຂໍໃໝ່ຍາມໃດກໍໄດ້ເມື່ອຊ່ວງລະຍະການຂາດຄຸນສົມບັດສິ້ນສຸດລົງ ຫຼື ຖ້າຫາກ ສະພາບການປ່ຽນແປງໄປ.
- ☐ ລະຍະການຍັ້ງຢືນຜົນປະໂຫຍດຂອງທ່ານໄດ້ສິ້ນສຸດລົງແລ້ວ. ທ່ານສາມາດຮ້ອງຂໍໃໝ່ຍາມໃດກໍໄດ້. ຜົນປະໂຫຍດ CalFresh ຂອງທ່ານອາດແຕກຕ່າງກັນໄປເນື່ອງຈາກ ______________________ ຂາດຄຸນສົມບັດ.

**ຄວາມຄິດເຫັນ:**

## ສິດທິໃນການຂໍໃຫ້ມີການພິຈາລະນາຄະດີຂອງທ່ານ

**ທ່ານມີສິດທີ່ຈະຂໍໃຫ້ມີການພິຈາລະນາຄະດີ ຖ້າວ່າ ທ່ານບໍ່ເຫັນດີນຳການປະຕິບັດໃດໆ ຂອງຄາວຕີ້. ທ່ານມີເວລາ 90 ວັນເທົ່ານັ້ນໃນການຂໍເອົາການພິຈາລະນາຄະດີ. ຈຳນວນວັນ 90 ວັນແມ່ນເລີ້ມແຕ່ວັນຫຼັງຈາກວັນທີ່ຄາວຕີ້ໄດ້ໃຫ້ ຫຼື ສົ່ງແຈ້ງການສະບັບນີ້ໃຫ້ທ່ານ. ຖ້າວ່າ ທ່ານມີເຫດຜົນທີ່ດີວ່າ ເປັນຫຍັງທ່ານຈຶ່ງບໍ່ສາມາດຍື່ນຄຳຮ້ອງຂໍເອົາການພິຈາລະນາຄະດີໄດ້ທັນພາຍໃນ 90 ວັນ, ທ່ານຍັງສາມາດຍື່ນຂໍເອົາການພິຈາລະນາຄະດີໄດ້. ຖ້າວ່າ ທ່ານມີເຫດຜົນທີ່ດີ, ການພິຈາລະນາຄະດີກໍຍັງອາດຈັດໃຫ້ມີຂຶ້ນໄດ້.**

**ຖ້າວ່າ ທ່ານຂໍເອົາການພິຈາລະນາຄະດີ ກ່ອນ ມີການດຳເນີນການເລື້ອງ ການຊ່ວຍເຫຼືອດ້ານເງິນສົດ, Medi-Cal, CalFresh , ຫຼື ຄ່າຝາກເດັກ ເກີດຂຶ້ນ:**

- ຜົນປະໂຫຍດດ້ານເງິນສົດ ຫຼື Medi-Cal ຂອງທ່ານຈະຍັງຄົງຄືເກົ່າໃນຂະນະທ່ານລໍຖ້າການພິຈາລະນາຄະດີ.
- ການບໍລິການຮັບຝາກເດັກຂອງທ່ານຈະຍັງຄົງຄືເກົ່າໃນຂະນະທ່ານລໍຖ້າການພິຈາລະນາຄະດີ.
- ຜົນປະໂຫຍດ CalFresh ຈະຍັງຄືເກົ່າ ຈົນກວ່າຮອດການພິຈາລະນາຄະດີ ຫຼື ສິ້ນສຸດໄລຍະການຢັ້ງຢືນຜົນປະໂຫຍດຂອງທ່ານ, ອັນໃດກໍໄດ້ທີ່ເກີດຂຶ້ນກ່ອນ.

**ຖ້າວ່າ ການຕັດສິນຄະດີບອກວ່າ ພວກເຮົາຖືກ, ທ່ານກໍຈະເປັນໜີ້ພວກເຮົາສຳລັບເງິນສົດພິເສດໃດໆ, CalFresh ຫຼື ຄ່າຝາກເດັກ ທີ່ທ່ານໄດ້ຮັບ.** ເພື່ອບອກໃຫ້ພວກເຮົາຫຼຸດລົງ ຫຼື ຢຸດຕິຜົນປະໂຫຍດການຊ່ວຍເຫຼືອຂອງທ່ານກ່ອນມີການພິຈາລະນາຄະດີ, ໃຫ້ໝາຍໃສ່ລຸ່ມນີ້:

ແມ່ນ, ໃຫ້ຫຼຸດລົງ ຫຼື ຢຸດຕິ: ☐ ການຊ່ວຍເຫຼືອດ້ານເງິນສົດ

☐ CalFresh ☐ ເງິນຊ່ວຍຄ່າຝາກເດັກ

**ໃນຂະນະທ່ານລໍຖ້າການຕັດສິນຄະດີສຳລັບ:**

Welfare to Work:

ທ່ານບໍ່ຕ້ອງເຂົ້າຮ່ວມໃນກິດຈະກຳຕ່າງໆ.

ທ່ານອາດໄດ້ຮັບເງິນຈ່າຍຄ່າຝາກເດັກສຳລັບການຈ້າງງານ ແລະສຳລັບກິດຈະກຳຕ່າງໆ ທີ່ໄດ້ຮັບອະນຸມັດຈາກຄາວຕີ້ກ່ອນແຈ້ງການສະບັບນີ້.

ຖ້າວ່າ ພວກເຮົາໄດ້ບອກທ່ານວ່າ ເງິນຈ່າຍຊ່ວຍເຫຼືອອື່ນໆຂອງທ່ານຈະຖືກຢຸດຕິ, ທ່ານຈະບໍ່ໄດ້ຮັບເງິນຈ່າຍຕື່ມໃດໆ, ເຖິງວ່າ ທ່ານຈະໄປເຂົ້າຮ່ວມກິດຈະກຳຂອງທ່ານກໍຕາມ.

ຖ້າວ່າ ພວກເຮົາໄດ້ບອກທ່ານວ່າ ພວກເຮົາຈະຈ່າຍເງິນຊ່ວຍເຫຼືອອື່ນໆຂອງທ່ານ, ເງິນທີ່ຈະຈ່າຍໃຫ້ນັ້ນແມ່ນຢູ່ໃນຈຳນວນເງິນ ແລະສຳລັບສິ່ງທີ່ພວກເຮົາໄດ້ບອກທ່ານໄວ້ໃນແຈ້ງການສະບັບນີ້.

- ເພື່ອໃຫ້ໄດ້ຮັບການບໍລິການຊ່ວຍເຫຼືອເຫຼົ່ານັ້ນ, ທ່ານຕ້ອງໄປເຂົ້າຮ່ວມກິດຈະກຳທີ່ທາງຄາວຕີ້ໄດ້ບອກໃຫ້ທ່ານໄປເຂົ້າຮ່ວມ.
- ຖ້າວ່າ ຈຳນວນເງິນຊ່ວຍເຫຼືອທີ່ທາງຄາວຕີ້ຈ່າຍໃຫ້ໃນຂະນະທ່ານລໍຖ້າຄຳຕັດສິນຄະດີ ແມ່ນບໍ່ພຽງພໍທີ່ຈະເຮັດໃຫ້ທ່ານສາມາດເຂົ້າຮ່ວມໄດ້, ທ່ານກໍບໍ່ຕ້ອງໄປເຂົ້າຮ່ວມກິດຈະກຳກໍໄດ້.

Cal-Learn:

- ທ່ານບໍ່ສາມາດເຂົ້າຮ່ວມໃນໂຄງການ Cal-Learn ໄດ້ ຖ້າວ່າ ພວກເຮົາໄດ້ບອກທ່ານວ່າ ພວກເຮົາບໍ່ສາມາດຮັບໃຊ້ທ່ານໄດ້.
- ພວກເຮົາຈະຈ່າຍສະເພາະສຳລັບການບໍລິການຊ່ວຍເຫຼືອ Cal-Learn ສຳລັບກິດຈະກຳທີ່ອະນຸມັດເທົ່ານັ້ນ.

### ຂໍ້ມູນອື່ນໆ

**ສະມາຊິກແຜນສຸຂະພາບ Medi-Cal Managed Care:** ການດຳເນີນການຕາມແຈ້ງການສະບັບນີ້ອາດລະງັບບໍ່ໃຫ້ທ່ານຮັບບໍລິການຈາກແຜນສຸຂະພາບແບບການຈັດການເບິ່ງແຍງຂອງທ່ານ. ທ່ານອາດຕ້ອງການຕິດຕໍ່ກັບພະແນກບໍລິການສະມາຊິກແຜນສຸຂະພາບຂອງທ່ານ ຖ້າວ່າທ່ານມີຄຳຖາມ.

**ເງິນຊ່ວຍເຫຼືອຄ່າລ້ຽງລູກ ແລະ/ຫຼື ຄ່າປິ່ນປົວ:** ອົງການດູແລຄ່າລ້ຽງດູລູກ ຈະຊ່ວຍເກັບເງິນຄ່າລ້ຽງດູລູກໂດຍທ່ານບໍ່ຕ້ອງເສັຽຄ່າໃຊ້ຈ່າຍໃດໆ ເຖິງວ່າ ທ່ານບໍ່ໄດ້ຢູ່ໃນໂຄງການຊ່ວຍເຫຼືອດ້ານເງິນສົດ. ຖ້າວ່າ ດຽວນີ້ ເຂົາເຈົ້າສາມາດເກັບກຳ ຄ່າລ້ຽງດູລູກໃຫ້ທ່ານໄດ້, ເຂົາເຈົ້າກໍຈະເຮັດແນວນັ້ນໄປເລື້ອຍໆ ຈົນກວ່າທ່ານຈະບອກໃຫ້ເຂົາເຈົ້າເຊົາໂດຍຂຽນບອກເປັນລາຍລັກອັກສອນ. ເຂົາເຈົ້າຈະສົ່ງເງິນຄ່າລ້ຽງດູລູກງວດປັດຈຸບັນທີ່ເຂົາເຈົ້າເກັບກຳໄດ້ໃຫ້ທ່ານ ແຕ່ເຂົາເຈົ້າຈະເກັບເງິນທີ່ຄ້າງຊຳລະ ຊຶ່ງເປັນໜີ້ຕໍ່ຄາວຕີ້ເອົາໄວ້.

**ການວາງແຜນຄອບຄົວ:** ຫ້ອງການສະຫວັດດີການຂອງທ່ານຈະໃຫ້ຂໍ້ມູນແກ່ທ່ານເມື່ອທ່ານຂໍ.

**ການຍື່ນຂໍເອົາການພິຈາລະນາຄະດີ:** ຖ້າວ່າ ທ່ານຂໍໃຫ້ມີການພິຈາລະນາຄະດີ, ທາງພະແນກພິຈາລະນາຄະດີຂອງຣັຖກໍຈະເຮັດແຟ້ມສຳນວນຂຶ້ນ. ທ່ານມີສິດທີ່ຈະຂໍເບິ່ງສຳນວນກ່ອນທີ່ຈະມີການພິຈາລະນາຄະດີ ແລະ ຂໍເອົາສຳເນົາສະແດງຈຸດຢືນຂອງຄາວຕີ້ໃນຄະດີຂອງທ່ານ ຢ່າງໜ້ອຍສອງວັນກ່ອນ ການພິຈາລະນາຄະດີ. ທາງຣັຖອາດສົ່ງສຳນວນຂອງທ່ານໄປທີ່ ກົມສະຫວັດດີການ ແລະກະຊວງສາທາລະນະສຸກ ແລະປະຊາສົງເຄາະ ແລະກະສິກຳແຫ່ງສະຫະຣັຖ. (W&I Code Sections 10850 and 10950.)

## ເພື່ອຂໍໃຫ້ມີການພິຈາລະນາຄະດີ:

- **ປະກອບຂໍ້ມູນໃສ່ໜ້ານີ້.**
- ເຮັດສຳເນົາຂອງດ້ານໜ້າ ແລະດ້ານຫຼັງຂອງເຈັ້ຽນີ້ເພື່ອເກັບໄວ້ເປັນຫຼັກຖານຂອງທ່ານເອງ.
  ຖ້າວ່າທ່ານຂໍ, ພະນັກງານກຳກັບການຊ່ວຍເຫຼືອຂອງທ່ານຈະເອົາສຳເນົາຂອງໜ້ານີ້ໃຫ້ທ່ານ.
- **ສົ່ງ ຫຼື ເອົາໜ້ານີ້ໄປທີ່:**

  ຫຼື
- **ໂທຣຟຣີ: 1-800-952-5253 ຫຼື** ສຳລັບຜູ້ບົກຜ່ອງດ້ານການໄດ້ຍິນ ແລະການປາກເວົ້າທີ່ໃຊ້ສາຍໂທຣ TDD, **1-800-952-8349.**

**ເພື່ອຮັບການຊ່ວຍເຫຼືອ: ທ່ານສາມາດຖາມກ່ຽວກັບສິດທິດ້ານການພິຈາລະນາຄະດີຂອງທ່ານ ຫຼື ກ່ຽວກັບການສົ່ງຕໍ່ຮັບການຊ່ວຍເຫຼືອດ້ານກົດໝາຍ ທີ່ເລກໂທຣຟຣີຂອງຣັຖທີ່ບົ່ງໄວ້ຂ້າງເທິງນີ້.** ທ່ານອາດໄດ້ຮັບການຊ່ວຍເຫຼືອດ້ານກົດໝາຍໂດຍບໍ່ເສັຽຄ່າທີ່ຫ້ອງການຊ່ວຍເຫຼືອດ້ານກົດໝາຍໃນເຂດຂອງທ່ານ ຫຼື ດ້ານສິດທິດ້ານສະຫວັດດີການ.

**ຖ້າວ່າ ທ່ານບໍ່ຕ້ອງການໄປຟັງການພິຈາລະນະຄະດີຕາມລຳພັງ, ທ່ານສາມາດພາໝູ່ເພື່ອນ ຫຼື ໃຜຜູ້ໜຶ່ງໄປກັບທ່ານໄດ້.**

### ຄຳຮ້ອງຂໍໃຫ້ມີການພິຈາລະນາຄະດີ

ຂ້າພະເຈົ້າຕ້ອງການໃຫ້ມີການພິຈາລະນາຄະດີເນື່ອງມາຈາກການປະຕິບັດຂອງກົມສະຫວັດດີການຂອງ _______________ ຄາວຕີ້ກ່ຽວກັບ:

☐ ການຊ່ວຍເຫຼືອດ້ານເງິນສົດ ☐ CalFresh

☐ Medi-Cal

☐ ອື່ນໆ (ໃຫ້ບອກ) ________________________________________

**ນີ້ແມ່ນເຫດຜົນ:** ________________________________________

________________________________________

________________________________________

________________________________________

________________________________________

________________________________________

☐ **ຖ້າວ່າ ທ່ານຕ້ອງການຂຽນຕື່ມອີກ, ໃຫ້ໝາຍໃສ່ບ່ອນນີ້ ແລະເພີ່ມໜ້າເຈັ້ຽໄດ້ອີກ.**

☐ ຂ້າພະເຈົ້າຕ້ອງການໃຫ້ຣັຖຈັດຫານາຍພາສາໃຫ້ຂ້າພະເຈົ້າໂດຍບໍ່ເສັຽຄ່າ. (ຍາດພີ່ນ້ອງ ຫຼື ເພື່ອນບໍ່ສາມາດແປພາສາໃຫ້ທ່ານໄດ້ທີ່ບ່ອນພິຈາລະນາຄະດີ.)

ພາສາ ຫຼື ພາສາທ້ອງຖິ່ນຂອງຂ້າພະເຈົ້າແມ່ນ: ____________________

| | | |
|---|---|---|
| ຊື່ຂອງບຸກຄົນຜູ້ທີ່ຜົນປະໂຫຍດຂອງເຂົາຖືກປະເສດ, ປ່ຽນແປງ ຫຼື ຢຸດຕິ | | |
| ວັນເດືອນປີເກີດ | ເລກໂທຣະສັບ | |
| ທີ່ຢູ່ຖະໜົນ | | |
| ເມືອງ | ຣັຖ | ລະຫັດໄປສະນີ |
| ລາຍເຊັນ | ວັນທີ | |
| ຊື່ຂອງບຸກຄົນທີ່ປະກອບຟອມນີ້ | ເລກໂທຣະສັບ | |

☐ **ຂ້າພະເຈົ້າຕ້ອງການໃຫ້ບຸກຄົນທີ່ມີຊື່ລຸ່ມນີ້ເປັນຕົວແທນຂ້າພະເຈົ້າຢູ່ບ່ອນພິຈາລະນາຄະດີ. ຂ້າພະເຈົ້າໃຫ້ການອະນຸຍາດແກ່ບຸກຄົນນີ້ໃນການເບິ່ງບັນທຶກ ຫຼື ໄປທີ່ບ່ອນພິຈາລະນະຄະດີເພື່ອຂ້າພະເຈົ້າ. (ບຸກຄົນນີ້ ສາມາດເປັນ ໝູ່ເພື່ອນ ຫຼື ຍາດພີ່ນ້ອງກໍໄດ້ ແຕ່ບໍ່ສາມາດແປພາສາໃຫ້ທ່ານໄດ້.)**

| | | |
|---|---|---|
| ຊື່ | ນ້ຳເບີໂທຣະສັບ | |
| ທີ່ຢູ່ຖະໜົນ | | |
| ເມືອງ | ຣັຖ | ລະຫັດໄປສະນີ |